ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*****************************

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 430/ຫສນຍ.ກລຂ

ນະຄອນຫລວງວຽງຈັນ, ວັນທີ 21. 3. 2017

# ແຈ້ງການ

**ຮຽນ:** - ບັນດາທ່ານລັດຖະມົນຕີກະຊວງ-ຫົວໜ້າອົງການຈັດຕັ້ງທຽບເທົ່າກະຊວງ.
- ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2560.

- ອີງຕາມມາດຕາ 55 ຂອງກົດໝາຍວ່າດ້ວຍແຮງງານ, ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013 ກ່ຽວກັບວັນພັກທາງລັດຖະການ.
- ອີງຕາມຮີດຄອງປະເພນີ ແລະ ມູນເຊື້ອອັນດີງາມຂອງຊາດລາວມາແຕ່ດົນນານ ໃນການສະເຫຼີມສະຫຼອງວັນບຸນປີໃໝ່ກຸດສົງການ.
- ອີງຕາມການຊີ້ນຳ ແລະ ຕົກລົງໃນກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ມີນາ 2017.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານລັດຖະມົນຕີ-ຫົວໜ້າອົງການຈັດຕັ້ງທຽບເທົ່າກະຊວງ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າແຂວງ, ຕະຫຼອດຮອດພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດຊາບ ດັ່ງນີ້:

1. ການສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2560 ເປັນປີທີ່ມີຄວາມໝາຍສຳຄັນ ຊຶ່ງເປັນປີທີ່ທົ່ວພັກ ທົ່ວປວງຊົນລາວ ສືບຕໍ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ- ສັງຄົມ ປະຈຳປີ 2017 ໃຫ້ປະກົດຜົນເປັນຈິງ.

2. ໃຫ້ຖືເອົາການສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2560 ທີ່ຈະໝູນວຽນມາເຖິງນີ້ ເປັນໂອກາດໜຶ່ງທີ່ສຳຄັນ ໃນການສືບຕໍ່ເສີມຂະຫຍາຍມູນເຊື້ອ ຮີດຄອງປະເພນີອັນດີງາມ ແລະ ຄວາມສາມັກຄີເປັນປຶກແຜ່ນຂອງຊາດ ທີ່ມີມາແຕ່ດົນນານແລ້ວ, ເປັນບຸນໃຫຍ່ປະຈຳຊາດ ທີ່ທົ່ວປວງຊົນລາວທັງຊາດ ຖືເອົາໂອກາດນີ້ ອວຍໄຊໃຫ້ພອນເຊິ່ງກັນ ແລະ ກັນ, ຈັດຕັ້ງສະເຫຼີມສະຫຼອງ ດ້ວຍບັນຍາກາດ

ເບີກບານມ່ວນຊື່ນ, ຖືກຕ້ອງຕາມຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ ຕິດພັນກັບການສົ່ງເສີມການທ່ອງທ່ຽວ ແລະ ບົນຈິດໃຈປະຢັດມັດທະຍັດ.

3. ເນື່ອງຈາກປີໃໝ່ລາວປີນີ້ ແມ່ນວັນທີ 14, 15 ແລະ 16 ເມສາ 2017 (ກົງກັບວັນສຸກ, ວັນເສົາ ແລະ ວັນອາທິດ), ຍ້ອນວ່າວັນທີ 15 ແລະ 16 ເມສາ ເປັນມື້ວັນເສົາ ແລະ ວັນອາທິດ, ຊຶ່ງເປັນມື້ພັກວັນລັດຖະການ. ສະນັ້ນ, ຈຶ່ງຕົກລົງເຫັນດີ ກຳນົດເອົາວັນທີ 13 ແລະ 17 ເມສາ 2017 (ກົງກັບວັນພະຫັດ ແລະ ວັນຈັນ) ເປັນວັນພັກຊົດເຊີຍ.

4. ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ຊີ້ນຳ, ການຜະລິດສະບຽງອາຫານ, ການສະໜອງເຄື່ອງອຸປະໂພກ ແລະ ບໍລິໂພກ ໃຫ້ພຽງພໍກັບຄວາມຕ້ອງການຂອງສັງຄົມ, ລວມທັງການຕິດຕາມ, ກວດກາ ແລະ ຄຸ້ມຄອງລາຄາສິນຄ້າ ໃນທ້ອງຕະຫຼາດ ເພື່ອບໍ່ໃຫ້ມີການສວຍໂອກາດຂຶ້ນລາຄາສິນຄ້າ ແລະ ສະບຽງອາຫານ ໂດຍບໍ່ມີເຫດຜົນ.

5. ໃຫ້ບັນດາກະຊວງ, ອົງການຈັດຕັ້ງທຽບເທົ່າກະຊວງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ຊີ້ນຳໃນການຮັກສາຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ໂດຍໃຫ້ມີການແບ່ງຄວາມຮັບຜິດຊອບ ໃນການຕິດຕາມ, ກວດກາເວນຍາມ ແລະ ປະຈຳການຄັກແນ່ ເພື່ອປ້ອງກັນສຳນັກງານອົງການ ຕະຫຼອດໄລຍະຫຼິ້ນບຸນປີໃໝ່ລາວ ແລະ ໃຫ້ສາມາດປະສານງານໄດ້ຢ່າງເປັນປົກກະຕິ.

- ໃຫ້ກະຊວງປ້ອງກັນຄວາມສະຫງົບ ສົມທົບກັບກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ແລະ ທ້ອງຖິ່ນ ເພື່ອຈັດສັນ ແລະ ອຳນວຍຄວາມສະດວກໃນການສັນຈອນໄປ-ມາໃຫ້ມີຄວາມປອດໄພ ແລະ ໃຫ້ເພີ່ມທະວີການໂຄສະນາ ເພື່ອສ້າງຈິດສຳນຶກໃຫ້ພົນລະເມືອງໃນທົ່ວສັງຄົມ ເຄົາລົບກົດລະບຽບຈໍລະຈອນ ເພື່ອປ້ອງກັນການເກີດອຸບັດຕິເຫດ.

6. ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ເພີ່ມທະວີການໂຄສະນາ ແລະ ປະຊາສຳພັນ ໃຫ້ປະຊາຊົນໃນທົ່ວສັງຄົມ ໄດ້ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບການສະຫຼອງບຸນປີໃໝ່ປະຈຳຊາດ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມຈິດໃຈຊີ້ນຳຂ້າງເທິງນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ພ. ພົມພິພັກ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| - ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ | 06 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ສຳເນົາ | 10 ສະບັບ |